# ແຫຼ່ງຂໍ້ມູນສໍາລັບຊາວຄາລິຟໍເນຍທຸກຄົນ

ຕອບຄໍາຖາມຫຼ້າສຸດຈາກຊຸມຊົນຂອງພວກເຮົາ:

ລັດຄາລິຟໍເນຍແມ່ນເປັນເຮືອນສໍາລັບບຸຄຄົນແລະຄອບຄົວທີ່ເປັນພົນລະເມືອງສະຫະລັດ ອາເມຣິກາ, ຜູ້ລີ້ໄພ, ຄົນເຂົ້າເມືອງທີ່ມີແລະບໍ່ມີເອກະສານການເຂົ້າເມືອງຫຼືຜູ້ທີ່ມີວີຊາຊົ່ວຄາວເພື່ອການສຶກສາຫຼືການຈ້າງງານໃຊ້ເປັນທີ່ຢູ່ອາໄສ.ຊາວຄາລິຟໍເນຍທຸກຄົນມີສິດທີ່ຈະໄດ້ຮັບບໍລິການເພື່ອຊ່ວຍເຫຼືອບຸຄຄົນທີ່ມີຄວາມພິການດ້ານພັດທະນາການແລະສະຕິປັນຍາພາຍໃຕ້ກົດໝາຍ Lanterman ຂອງລັດຄາລິຟໍເນຍ ຫຼັງຈາກທີ່ສູນເຣຈິນັລທີ່ບໍ່ຫວັງຜົນກໍາໄລໄດ້ກໍານົດການມີສິດໄດ້ຮັບຄວາມຊ່ວຍເຫຼືອຂອງເຂົາເຈົ້າແລ້ວແລະໄດ້ພິຈາລະນາການນໍາໃຊ້ຄວາມຊ່ວຍເຫຼືອອື່ນໆທີ່ເປັນໄປໄດ້ຢ່າງສົມບູນແລ້ວ.ນັບຕັ້ງແຕ່ເດືອນກຸມພາປີ2025ການນໍາໃຊ້ບໍລິການເຫຼົ່ານີ້ປົກກະຕິແລ້ວຈະບໍ່ເປັນການແຊກແຊງສະຖານະການເຂົ້າເມືອງຂອງຜູ້ເຂົ້າຮ່ວມທີ່ບໍ່ແມ່ນພົນລະເມືອງ.ຖ້າບຸຄຄົນທີ່ບໍ່ແມ່ນພົນລະເມືອງທີ່ສົນໃຈໃນບໍລິການເຫຼົ່ານີ້ມີຄໍາຖາມກ່ຽວກັບຜົນກະທົບຕໍ່ສະຖານະຄົນເຂົ້າເມືອງຂອງເຂົາເຈົ້າເຂົາເຈົ້າອາດຈະຕ້ອງການກວດເບິ່ງຄູ່ມືນີ້ແລະປຶກສາກັບຜູ້ໃຫ້ບໍລິການດ້ານກົດໝາຍຄົນເຂົ້າເມືອງ.ນອກຈາກນີ້ຍັງມີແຫຼ່ງຂໍ້ມູນຢູ່ໃນໜ້າເວັບແຫຼ່ງຂໍ້ມູນໃນໜ້າເວັບສໍາລັບຊາວຄາລິຟໍເນຍທຸກຄົນທີ່ອາດຈະໜ້າສົນໃຈສໍາລັບຊຸມຊົນຂອງພວກເຮົາ.ພວກເຮົາຍັງຄົງໝັ້ນໃຈໃນຄວາມສາມາດຂອງລັດແລະສູນເຣຈິນັລທີ່ຈະສືບຕໍ່ໃຫ້ບໍລິການແກ່ຊາວຄາລິຟໍເນຍຕໍ່ໄປໄດ້.

ດ້ວຍຄວາມຮ່ວມມືກັນ,
ພະແນກບໍລິການດ້ານພັດທະນາການ